**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ຄົມມະນາຄົມ ຂົນສົ່ງ
ໄປສະນີ ແລະ ກໍ່ສ້າງ
ກົມຂົນສົ່ງ

ເລກທີ 9051/ກຂສ
ວັນທີ 08/10/2002

# ບົດແນະນຳ

## ກ່ຽວກັບການຂໍປ່ຽນ, ການນຳໃຊ້ໃບຂັບຂີ່ປະເພດຕ່າງໆ, ເງື່ອນໄຂ ການນຳໃຊ້ ແລະ ການຂໍໃບຂັບຂີ່ສະບັບໃໝ່ເພື່ອປ່ຽນແທນສະບັບເກົ່າທີ່ເສັຍຫາຍ (ເອກະສານຊ້ອນທ້າຍເລກ I ຂອງຂໍ້ກຳນົດ ກ່ຽວກັບລະບຽບການໃນການຄຸ້ມຄອງ ແລະ ການສອບເສັງໃບຂັບຂີ່ຍານພາຫະນະຂົນສົ່ງທາງບົກ ເລກທີ່3416/ຄຂປກ ລົງວັນທີ04/09/2002)

**I. <u>ການຂໍປ່ຽນ, ການນຳໃຊ້ ແລະ ເງື່ອນໄຂການນຳໃຊ້ໃບຂັບຂີ່ຢູ່ ສປປ ລາວ.</u>**

- ໃບຂັບຂີ່ປະເພດອື່ນໆ ທີ່ບໍ່ແມ່ນໃບຂັບຂີ່ຂອງພົນລະເຮືອນລາວ ສາມາດຂໍປ່ຽນເອົາໃບຂັບຂີ່ຂອງພົນລະເຮືອນລາວ ໂດຍຕ້ອງປະກອບເອກະສານສະເໜີເຖິງກົມຂົນສົ່ງ ດັ່ງນີ້:

1. **<u>ການຂໍປ່ຽນຈາກໃບຂັບຂີ່ກອງທັບ:</u>**

- ທະຫານ, ພະນັກງານ ຫລື ລັດຖະກອນ ຂອງກຳລັງປ້ອງກັນຊາດ ຜູ້ທີ່ມີໃບຂັບຂີ່ຂອງກອງທັບ ທີ່ຜ່ານການສອບເສັງ ໄດ້ຕາມຫລັກສູດຂອງກອງທັບ ແລະ ອອກໃຫ້ໂດຍ ພາກສ່ວນກ່ຽວຂ້ອງ ຂອງກະຊວງປ້ອງກັນປະເທດ, ຖ້າຈະປ່ຽນເອົາໃບ ຂັບຂີ່ຂອງພົນລະເຮືອນຕ້ອງໄດ້ປະກອບເອກະສານຕ່າງໆ ດັ່ງນີ້:

- ໃບຄຳຮ້ອງຂໍປ່ຽນໃບຂັບຂີ່ ໂດຍຜ່ານຄຳເຫັນຢັ້ງຢືນຈາກກົມກອງທີ່ກ່ຽວຂ້ອງ ຫລື ຖ້າໄດ້ປົດປ່ອຍອອກເປັນປະຊາຊົນ ແລ້ວ ໃຫ້ເຊັນຢັ້ງຢືນຈາກອຳນາດການປົກຄອງບ້ານ.
- ໃບນຳສົ່ງຂອງພາກສວ່ນຄຸ້ມຄອງໃບຂັບຂີ່ ຂອງກະຊວງປ້ອງກັນປະເທດ.
- ເອກະສານສຳນວນເດີມ ທັງໝົດຂອງໃບຂັບຂີ່.
- ໃບຢັ້ງຢືນທີ່ຢູ່.
- ໃບຢັ້ງຢືນສຸຂະພາບ.
- ໃບຂັບຂີ່ ສະບັບຕົ້ນ.
- ຮູບຖ່າຍສີຂະໜາດ 3x4 ຈຳນວນ 6 ໃບ.

**ໝາຍເຫດ**: ພາຍຫລັງໄດ້ຮັບໃບອະນຸຍາດປ່ຽນໃບຂັບຂີ່ຈາກກົມຂົນສົ່ງແລ້ວ ຕ້ອງໄດ້ນໍາເອກະສານທັງໝົດໄປສະເໜີຕໍ່ ກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ ປະຈໍາແຂວງ, ກໍາແພງນະຄອນ ຫລື ເຂດພິເສດ ທີ່ຕົນອາໄສຢູ່ ແລະ ຕ້ອງໄດ້ຜ່ານການທົດສອບ ພາກທິດສະດີຄືນໃໝ່ ໂດຍ ຄະນະກໍາມະການສອບເສັງໃບຂັບຂີ່.

2. **ການຂໍປ່ຽນ ແລະ ການນໍາໃຊ້ໃບຂັບຂີ່ຕ່າງປະເທດ ແລະ ໃບຂັບຂີ່ສາກົນຂອງຕ່າງປະເທດຢູ່ ສປປ ລາວ:**

ໃບຂັບຂີ່ຂອງຕ່າງປະເທດ ຫລື ໃບຂັບຂີ່ສາກົນຂອງຕ່າງປະເທດ ຂອງພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ທີ່ອາໄສ ແລະ ປະກອບອາຊີບຢູ່ ສປປ ລາວ ບໍ່ສາມາດນໍາໃຊ້ໄດ້ຢູ່ ສປປ ລາວ ຕ້ອງໄດ້ປ່ຽນເອົາໃບຂັບຂີ່ພົນລະເຮືອນລາວ ສໍາລັບການຮ້ອງຂໍປ່ຽນນັ້ນ ເຈົ້າຂອງໃບຂັບຂີ່ດັ່ງກ່າວ ຕ້ອງປະກອບເອກະສານ ດັ່ງນີ້:

- ໃບຄໍາຮ້ອງຂໍປ່ຽນໃບຂັບຂີ່, ຖ້າແມ່ນພະນັກງານ ໃຫ້ເຊັນຢັ້ງຢືນຈາກການຈັດຕັ້ງກ່ຽວຂ້ອງ.
- ໃບຢັ້ງຢືນທີ່ຢູ່.
- ໃບຢັ້ງຢືນສຸຂະພາບ.
- ໃບຂັບຂີ່ ລະບັບຕົ້ນ.
- ຮູບຖ່າຍສີຂະໜາດ 3x4 ຈໍານວນ 6 ໃບ.

**ໝາຍເຫດ:** ພາຍຫລັງ ໄດ້ຮັບໃບອະນຸຍາດປ່ຽນໃບຂັບຂີ່ຈາກ ກົມຂົນສົ່ງແລ້ວ ຕ້ອງໄດ້ນໍາເອກະສານທັງໝົດໄປສະເໜີຕໍ່ ກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ ປະຈໍາແຂວງ, ກໍາແພງນະຄອນ ຫລື ເຂດພິເສດ ທີ່ຕົນອາໄສຢູ່ ຜູ້ກ່ຽວຕ້ອງໄດ້ ຜ່ານການທົດສອບ ພາກທິດສະດີຄືນໃໝ່ ໂດຍ ຄະນະກໍາມະການສອບເສັງໃບຂັບຂີ່.

- ➢ ຄົນຕ່າງປະເທດ ທີ່ກໍາລັງປະຕິບັດໜ້າທີ່ລັດຖະການ ຫລື ປະກອບທຸລະກິດຢູ່ ສປປ ລາວ ຕ້ອງມີໃບຢັ້ງຢືນການນໍາໃຊ້ ຈາກກົມຂົນສົ່ງ ຈຶ່ງສາມາດນໍາໃຊ້ໄດ້. ຊຶ່ງການຂໍໃບຢັ້ງຢືນການນໍາໃຊ້ໃບຂັບຂີ່ດັ່ງກ່າວໃຫ້ປະກອບເອກະສານດັ່ງນີ້:

- ໃບສະເໜີຈາກການຈັດຕັ້ງທີ່ກ່ຽວຂ້ອງ ເຊັ່ນ: ສະຖານທູດ, ອົງການຈັດຕັ້ງສາກົນຕ່າງໆ ຫລື ບໍລິສັດທີ່ເຈົ້າຂອງໃບຂັບຂີ່ ສັງກັດຢູ່.
- ສໍາເນົາໃບຂັບຂີ່, ເວລາຍື່ນຄໍາຮ້ອງຕ້ອງຖືສະບັບຕົ້ນໄປພ້ອມ.
- ຮູບຖ່າຍສີຂະໜາດ 3x4 ຈໍານວນ 2 ໃບ.

ໃນກໍລະນີ ທີ່ໃບຂັບຂີ່ບໍ່ໄດ້ລະບຸເປັນພາສາ ສາກົນໄວ້ ຈະຕ້ອງມີເອກະສານແປເປັນພາສາ ສາກົນ ແລະ ຢັ້ງຢືນຈາກສະຖານທູດ ຫລື ສະຖານກົງສູນ ຂອງປະເທດກ່ຽວຂ້ອງຕິດຄັດມາພ້ອມ.

**ໝາຍເຫດ**: ໃບອະນຸຍາດການນໍາໃຊ້ໃບຂັບຂີ່ຕ່າງປະເທດ ແລະ ສາກົນຂອງຕ່າງປະເທດ ຢູ່ ສປປ ລາວ ມີອາຍຸນາໃຊ້01 ປີ ກ່ອນຈະໝົດອາຍຸ ຜູ້ກ່ຽວຈະຕ້ອງປະກອບຄໍາຮ້ອງ ເພື່ອຂໍຕໍ່ ນໍາກົມຂົນສົ່ງຕື່ມ.

- ມີແຕ່ກົມຂົນສົ່ງເທົ່ານັ້ນ ທີ່ມີສິດອອກໃບອະນຸຍາດ ການນຳໃຊ້ໃບຂັບຂີ່ຕ່າງປະເທດ ແລະ ສາກົນ.

3. **ການຂໍປ່ຽນເອົາ ແລະການນຳໃຊ້ໃບຂັບຂີ່ສາກົນ ຂອງ ສປປ ລາວ.**

ການຂໍປ່ຽນເອົາໃບຂັບຂີ່ສາກົນ ຂອງ ສປປ ລາວ ແມ່ນການຂໍປ່ຽນຈາກໃບຂັບຂີ່ຂອງພົນລະເຮືອນລາວ ຫລື ຈາກໃບຂັບຂີ່ຂອງຕ່າງປະເທດໃດໜຶ່ງ ຕາມປະເພດທີ່ໄດ້ຮັບອະນຸຍາດ ມາເປັນໃບຂັບຂີ່ສາກົນ ຂອງ ສປປ ລາວ ເພື່ອໄປນຳໃຊ້ຢູ່ຕ່າງປະເທດ ຕ້ອງມີເງື່ອນໄຂ ດັ່ງນີ້:

- ສຳລັບ ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ທີ່ມີຈຸດປະສົງຢາກປ່ຽນເອົາໃບຂັບຂີ່ສາກົນ ຂອງ ສປປ ລາວ ຕ້ອງມີໃບຂັບຂີ່ ປະເພດທີ່ຕົນຮ້ອງຂໍມາແລ້ວຢ່າງໜ້ອຍ 1 ປີ ແລະ ບໍ່ເຄີຍກໍ່ໃຫ້ເກີດອຸປະຕິເຫດ ຫລື ກະທຳຜິດກົດຈະລາຈອນ ໃນສະຖານໜັກ ແລະ ຕ້ອງປະກອບເອກະສານ ດັ່ງນີ້:
  - ໃບຄຳຮ້ອງຂໍປ່ຽນໃບຂັບຂີ່ ຖ້າແມ່ນພະນັກງານໃຫ້ເຊັນຢັ້ງຢືນຈາກການຈັດຕັ້ງຂອງຕົນ ຖ້າເປັນປະຊາຊົນ ໃຫ້ເຊັນຢັ້ງຢືນຈາກອຳນາດການປົກຄອງບ້ານ, ຖ້າເປັນຄົນຕ່າງດ້າວ ຫລື ຄົນບໍ່ມີສັນຊາດໃຫ້ເຊັນຢັ້ງຢືນຈາກອົງການລັດ ທີ່ກ່ຽວຂ້ອງ.
  - ສຳເນົາໃບຂັບຂີ່.
  - ຮູບຖ່າຍ ຂະໜາດ 4X6 ຈຳນວນ 2 ໃບ.
- ສຳລັບຄົນຕ່າງປະເທດ ທີ່ປະຕິບັດໜ້າທີ່ ຢູ່ ສປປ ລາວ ໃນນາມພະນັກງານ ສະຖານທູດ, ພະນັກງານຂອງອົງການຈັດຕັ້ງສາກົນຕ່າງໆ ປະຈຳ ສປປ ລາວ, ຊ່ຽວຊານໂຄງການ ຫລື ເປັນນັກທຸລະກິດ ທີ່ດຳເນີນທຸລະກິດ ຢູ່ ສປປ ລາວ ຕ້ອງມີໃບຂັບຂີ່ ລາວ ຫລື ໃບຂັບຂີ່ຂອງຕ່າງປະເທດ ຕາມປະເພດທີ່ຮ້ອງຂໍ ແລະ ຍັງມີອາຍຸນຳໃຊ້ ຢ່າງໜ້ອຍ ໜຶ່ງປີ ແລະ ຕ້ອງປະກອບ ເອກະສານ ດັ່ງນີ້:
  - ໃບຄຳຮ້ອງຂໍປ່ຽນໃບຂັບຂີ່ ຂອງຕົນເອົາໃບຂັບຂີ່ສາກົນຂອງ ສປປ ລາວ ທີ່ເຊັນຢັ້ງຢືນຈາກການຈັດຕັ້ງກ່ຽວຂ້ອງ ຂອງຕົນ.
  - ສຳເນົາໃບຂັບຂີ່.
  - ຮູບຖ່າຍ ຂະໜາດ 4X6 ຈຳນວນ 2 ໃບ.

## II. <u>ການຂໍໃບຂັບຂີ່ສະບັບໃໝ່ ແທນສະບັບເກົ່າທີ່ເສຍຫາຍ.</u>

1. ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຄົນຕ່າງປະເທດ ທີ່ໄດ້ເຮັດໃບຂັບຂີ່ພົນລະເຮືອນລາວ ຂອງຕົນເສັຍຫາຍ ຈະຕ້ອງປະຕິບັດຕາມລະບຽບການ ຈຶ່ງຈະໄດ້ຮັບການພິຈາລະນາ ອອກໃບຂັບຂີ່ສະບັບໃໝ່ໃຫ້ ດັ່ງນີ້:
   - ແຈ້ງການເສຍຫາຍຕໍ່ການຈັດຕັ້ງຂອງຕົນ ອຳນາດການປົກຄອງທີ່ຕົນມີພູມລຳເນົາຢູ່ ຫລື ອົງການລັດທີ່ກ່ຽວຂ້ອງ ພ້ອມທັງຂໍໃບຢັ້ງຢືນກ່ຽວກັບການເສຍຫາຍ ແລະໃບຄຳຮ້ອງຂໍເຮັດໃບຂັບຂີ່ໃໝ່.

- ນຳເອົາໃບຢັ້ງຢືນການເສຍຫາຍທີ່ອົງການຈັດຕັ້ງ, ອຳນາດການປົກຄອງ ຫລື ອົງການລັດທີ່ກ່ຽວຂ້ອງ ອອກໃຫ້ໄປແຈ້ງຕໍ່ ກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ເພື່ອກວດກາຫົວຂັ້ວນ ແລະ ອອກໃບຢັ້ງຢືນໃຫ້.
- ນຳເອົາໃບຢັ້ງຢືນ ທີ່ກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ອອກໃຫ້ນັ້ນ ໄປຍື່ນຕໍ່ກອງຕຳຫລວດຈະລາຈອນ ເພື່ອກວດກາ ແລະ ຢັ້ງຢືນວ່າ ໃບຂັບຂີ່ດັ່ງກ່າວ ເສຍຫາຍແທ້ (ບໍ່ໄດ້ຖືກກັກໂດຍເຈົ້າໜ້າທີ່ຕຳຫລວດຈະລາຈອນ).
- ນຳເອົາໃບຢັ້ງຢືນທີ່ ຕຳຫລວດຈະລາຈອນອອກໃຫ້ ກັບຄືນໄປ ກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ ເພື່ອສະເໜີຂໍອອກສະບັບໃໝ່ໃຫ້. ຍົກເວັ້ນກໍລະນີທີ່ໃບຂັບຂີ່ຖືກເຈົ້າໜ້າທີ່ຕຳຫລວດຈະລາຈອນກັກໄວ້ ເນື່ອງຈາກ ເຈົ້າຂອງໃບຂັບຂີ່ ກະທຳຜິດ ຫລື ລະເມີດກົດລະບຽບການຈະລາຈອນນັ້ນ ຜູ້ກ່ຽວແມ່ນຈະບໍ່ໄດ້ຮັບການພິຈາລະນາອອກໃບຂັບຂີ່ໃໝ່ປ່ຽນແທນໃຫ້.

2. ຄົນຕ່າງປະເທດ ທີ່ໄດ້ເຮັດໃບຢັ້ງຢືນການນຳໃຊ້ໃບຂັບຂີ່ຕ່າງປະເທດ ແລະ ສາກົນ ທີ່ອອກໃຫ້ໂດຍກົມຂົນສົ່ງເສຍຫາຍ ໃຫ້ປະຕິບັດຕາມຫລັກການດັ່ງນີ້:
    - ເຮັດໃບແຈ້ງເສຍຫາຍ ຈາກການຈັດຕັ້ງທີ່ຕົນສັງກັດຢູ່ ສະເໜີຕໍ່ກົມຂົນສົ່ງ ເພື່ອຢັ້ງຢືນສຳເນົາເດີມ.
    - ນຳເອົາໃບຢັ້ງຢືນ ທີ່ກົມຂົນສົ່ງອອກໃຫ້ ໄປຍື່ນຕໍ່ກອງຕຳຫລວດຈະລາຈອນ ເພື່ອກວດກາ ແລະ ຢັ້ງຢືນວ່າໃບຂັບຂີ່ ດັ່ງກ່າວ ເສຍຫາຍແທ້ (ບໍ່ໄດ້ຖືກກັກໂດຍເຈົ້າໜ້າທີ່ຕຳຫລວດຈະລາຈອນ).
    - ນຳເອົາໃບຢັ້ງຢືນທີ່ຕຳຫລວດຈະລາຈອນ ອອກໃຫ້ກັບຄືນໄປ ກົມຂົນສົ່ງ ພ້ອມທັງອັດສຳເນົາໃບຂັບຂີ່ເດີມ ແລະ ຮູບຖ່າຍ 2 ໃບ ເພື່ອອອກສະບັບໃໝ່ໃຫ້ ຍົກເວັ້ນກໍລະນີທີ່ໃບຂັບຂີ່ ຖືກເຈົ້າໜ້າທີ່ຕຳຫລວດຈະລາຈອນກັກໄວ້ ເນື່ອງຈາກ ເຈົ້າຂອງໃບຂັບຂີ່ກະທຳຜິດ ຫລື ລະເມີດກົດລະບຽບການຈະລາຈອນນັ້ນ ຜູ້ກ່ຽວແມ່ນຈະບໍ່ໄດ້ຮັບການພິຈາລະນາ ອອກໃບຂັບຂີ່ໃໝ່ປ່ຽນແທນໃຫ້ເຊັ່ນກັນ.

**ຫົວໜ້າກົມຂົນສົ່ງ**

ລັດຕະນະມະນີ ຄູນນີວົງ